School counselling service
Information for parents and carers

# ບໍລິການໃຫ້ຄໍາປຶກສາ ຂອງ ໂຮງຮຽນ

## ຂໍ້ມູນສໍາລັບພໍ່ແມ່ແລະຜູ້ດູແລ

ໂຮງຮຽນຫຼວງ ຂອງ ຣັດ NSW ທັງໝົດມີການເຂົ້າເຖິງການຊ່ວຍເຫຼືອທາງດ້ານຈິດໃຈໂດຍຜ່ານການບໍລິການໃຫ້ຄໍາປຶກສາຂອງໂຮງຮຽນ.

ການບໍລິການໃຫ້ຄໍາປຶກສາຂອງໂຮງຮຽນປະກອບມີຜູ້ໃຫ້ຄໍາປຶກສາໂຮງຮຽນແລະນັກຈິດຕະວິດທະຍາຂອງໂຮງຮຽນທີ່ໃຫ້ຄໍາປຶກສາ, ການປະເມີນທາງດ້ານຈິດໃຈ ແລະການບໍລິການຂຶ້ນແຜນຊ່ວຍເຫຼືອສໍາລັບນັກຮຽນຕຽມອະນຸບານຈົນເຖິງປີ 12. ພວກເຂົາເຮັດວຽກຄຽງຄູ່ກັບຄອບຄົວ, ພະນັກງານໂຮງຮຽນ, ແລະ ຜູ້ຊ່ຽວຊານດ້ານອື່ນໆເພື່ອສະໜັບສະໜູນຄວາມຕ້ອງການດ້ານການຮຽນຮູ້, ສຸຂະພາບຈິດແລະສະຫວັດດີການຂອງນັກຮຽນ ແລະ ເພື່ອສ້າງສະພາບແວດລ້ອມການຮຽນຮູ້ທີ່ປອດໄພ, ດີຕໍ່ສຸຂະພາບ ແລະ ມີການສະຫນັບສະຫນູນ.

ພະນັກງານໃຫ້ຄໍາປຶກສາໃນໂຮງຮຽນທຸກຄົນມີຄຸນວຸດທິການສຶກສາລະດັບສູງກວ່າປຣິນຍາຕຣີໃນດ້ານຈິດຕະວິທະຍາແລະນໍາໃຊ້ຄວາມຊໍານານຂອງ ເຂົາເຈົ້າໃນດ້ານສຸຂະພາບຈິດ, ການຮຽນຮູ້, ແລະ ພຶດຕິກໍາເພື່ອຊ່ວຍໃຫ້ເດັກນ້ອຍແລະວັຍໜຸ່ມປະສົບຄວາມສໍາເລັດທາງດ້ານວິຊາການ, ສັງຄົມ, ພຶດຕິກໍາ, ແລະອາລົມ.

ຜູ້ໃຫ້ຄໍາປຶກສາຂອງໂຮງຮຽນ ຫຼື ນັກຈິດຕະວິທະຍາຂອງໂຮງຮຽນສາມາດ:

- ໃຫ້ຄໍາປຶກສາແກ່ນັກຮຽນ
- ປະເມີນຄວາມຕ້ອງການດ້ານການຮຽນຮູ້ ແລະ ສຸຂະພາບຈິດຂອງນັກຮຽນ
- ເຮັດວຽກຮ່ວມມືກັບຄູສອນ ແລະ ເຈົ້າໜ້າທີ່ຜູ້ຊ່ຽວຊານ
- ຊ່ວຍໃຫ້ຄອບຄົວເຂົ້າໃຈ ແລະ ຈັດການຄວາມຕ້ອງການດ້ານການຮຽນຮູ້ ແລະ ສຸຂະພາບຈິດຂອງລູກພວກເຂົາ
- ຕິດຕໍ່ພົວພັນກັບອົງການພາຍນອກ ແລະ ຜູ້ຊ່ຽວຊານດ້ານສຸຂະພາບຈິດເພື່ອໃຫ້ການສະໜັບສະໜູນທີ່ມີການປະສານງານ ແລະ ຮອບດ້ານສໍາລັບນັກຮຽນແຕ່ລະຄົນ.

ໃນເວລາທີ່ເຮັດວຽກກັບນັກຮຽນ ພໍ່ແມ່ ຫຼື ຜູ້ດູແລ ແລະ ຄູອາຈານ, ເຈົ້າໜ້າທີ່ໃຫ້ປຶກສາຂອງໂຮງຮຽນຈະອະທິບາຍວິທີການເຮັດວຽກຂອງພວກເຂົາ ຕັ້ງຟັງໃນສິ່ງທີ່ເວົ້າ ຊ່ວຍຊີ້ແຈງທາງເລືອກແລະຊຸກຍູ້ການຕັດສິນໃຈຢ່າງຮອບຮູ້.

## ການຮັກສາຄວາມລັບ

ເຈົ້າໜ້າທີ່ໃຫ້ຄໍາປຶກສາຂອງໂຮງຮຽນໃຫ້ການສະໜັບສະໜູນທາງດ້ານຈິດໃຈໂດຍສະໝັກໃຈ ແລະເປັນຄວາມລັບສໍາລັບນັກຮຽນ. ຂໍ້ມູນທີ່ເປັນຄວາມລັບຈະບໍ່ຖືກແບ່ງປັນກັບຜູ້ອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກນັກຮຽນ ພໍ່ແມ່ ຫຼື ຜູ້ດູແລ ເວັ້ນເສັຍແຕ່ວ່າກົດໝາຍກໍານົດໄວ້ ຫຼື ເພື່ອປ້ອງກັນຄວາມສ່ຽງທີ່ຮ້າຍແຮງຕໍ່ຄວາມປອດໄພ ຫຼື ຄວາມເປັນຢູ່ທີ່ດີ.

## ການແນະນໍາສົ່ງຕໍ່

ບູລິມະສິດສໍາລັບການສະໜັບສະໜູນການໃຫ້ຄໍາປຶກສາຂອງໂຮງຮຽນແມ່ນຈະຖືກພິຈາລະນາໂດຍການປຶກສາຫາລືກັບທີມງານການຮຽນຮູ້ ແລະສະຫວັດດີການຂອງໂຮງຮຽນ. ພໍ່ແມ່ ຫຼື ຜູ້ດູແລຜູ້ທີ່ມີຄວາມກັງວົນຕໍ່ການຮຽນຮູ້ ສຸຂະພາບຈິດ ແລະ/ຫຼື ຄວາມເປັນຢູ່ທີ່ດີຂອງລູກເຂົາເຈົ້າສາມາດຂໍນັດໝາຍໄດ້ໂດຍການຕິດຕໍ່ໂຮງຮຽນ. ນັກຮຽນຍັງສາມາດແນະນໍາຕົນເອງ ຫຼື ຂໍຄວາມຊ່ວຍເຫຼືອຈາກພໍ່ແມ່ ຫຼື ເຈົ້າໜ້າທີ່ການສອນເພື່ອທໍາການນັດໝາຍ.

## ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາໂທຫາໂຮງຮຽນ. ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍໃນການສອບຖາມຂອງທ່ານ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ຕາມເບີ 131 450 ແລະ ຂໍເອົານາຍພາສາທີ່ປາກພາສາຂອງທ່ານ.

ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການທີ່ຈະໂທຫາ ແລະ ຜູ້ຮັບສາຍຈະຫາເອົານາຍພາສາເຂົ້າມາໃນສາຍເພື່ອຊ່ວຍທ່ານໃນການສົນທະນາ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.